ກອງທຶນບັນເທົາທຸກແຫ່ງລັດວໍຊິງຕັນ (WA Equity Relief Fund) ສໍາລັບອົງກອນບໍ່ຫວັງຜົນກໍາໄລ
WA Equity Relief Fund ສະໜອງທຶນໃຫ້ອົງກອນບໍ່ຫວັງຜົນກໍາໄລທີ່ນໍາພາໂດຍ ແລະ ໃຫ້ບໍລິການຊຸມຊົນ BIPOC (ຄົນຜິວດໍາ, ຄົນພື້ນເມືອງ, ຄົນຜິວສີ) ທີ່ສ່ວນໃຫ່ຍໄດ້ຮັບຜົນກະທົບຈາກ ການລະບາດຂອງເຊື້ອໂຄວິດທີ່ເປັນວົງກວ້າງທົ່ວໂລ.
ຄ່າໃຊ້ຈ່າຍບັນເທົາທຸກຈະສະໜອງການສະໜັບສະໜູນໃນການດໍາເນີນງານທົ່ວໄປ, ການດໍາເນີນງານທີ່ຫຍືດຫຍຸ່ນສໍາລັບບັນດາອົງກອນສໍາຄັນເຫລົ່ານີ້.
ຜູ້ສະໝັກທີ່ມີຄຸນສົມບັດເຂົ້າເກນຈະຕ້ອງແມ່ນ ອົງກອນບໍ່ຫວັງຜົນກໍາໄລ 501(c)3 ຫຼື ອົງກອນປະຈໍາທີ່ຊຸມຊົນທີ່ໄດ້ຮັບການອຸປະຖໍາທາງການເງິນໂດຍ ອົງກອນບໍ່ຫວັງຜົນກໍາໄລປະເພດ 501(c)3.

ກົມການຄ້າແຫ່ງລັດວໍຊິງຕັນ (The Washington State Department of Commerce) ຮ່ວມມືກັບ Philanthropy Northwest ເພື່ອຈັດການທຶນເພື່ອການບັນເທົາທຸກ 2 ລ້ານໂດລາສະຫະລັດຈາກ ເງິນຊ່ວຍເຫຼືອ ໄວຣັດໂຄໂຣນາແຫ່ງລັດຖະບານກາງ, ເງິນຊ່ວຍເຫຼືອ (CARES) Act ຜ່ານທາງການສະໝັກແບບເປີດກວ້າງ ໃຫ້ແກ່ອົງກອນທີ່ບໍ່ຫວັງຜົນກໍາໄລປະຈໍາຊຸມຊົນ ແລະ ອົງການຈັດຕັ້ງຊົນເຜົ່າທີ່ໄດ້ຮັບຜົນກະທົບຫລາຍທີ່ສຸດຈາກ ການລະບາດ COVID-19.

ການລະບາດ COVID-19 ໄດ້ເຮັດໃຫ້ເກີດຜົນກະທົບອັນທີ່ບໍ່ເຄີຍມີມາກ່ອນຕໍ່ອົງກອນບໍ່ຫວັງຜົນກໍາໄລ ລວມທັງ ການປະເຊີນກັບຄວາມຮຽກຮ້ອງຕ້ອງການ ຫຼື ການລົບກວນ/ການສ້າງການບໍລິການທີ່ເພີ່ມຂຶ້ນ; ການຍົກເລີກສັນຍາ, ໂຄງການ, ການບໍລິການ ຫລື ການສູນເສຍການສະໜອງທຶນ ເຊັ່ນວ່າ ບັນດາຜູ້ສະໜອງທຶນທີ່ຖືກຍົກເລີກ, ການບໍລິຈາກທີ່ຫຼຸດນ້ອຍລົງ ແລະ / ຫຼື ບັນຫາອື່ນໆທີ່ກະທົບຄວາມສາມາດຂອງພະນັກງານ ແລະ ອາສາສະໝັກ. ພວກເຮົາຮູ້ວ່າ ອົງກອນຕ່າງໆທີ່ນໍາພາໂດຍ ແລະ ໃຫ້ບໍລິການຄົນຜິວດໍາ, ຄົນພື້ນເມືອງ, ຄົນອາຊີ (ໂດຍສະເພາ ຄົນອາຊີຕາເວັນອອກສ່ຽງໃຕ້), ຊາວຮາວາຍດັ້ງເດີມ ແລະ ຊາວເກາະປາຊີຟິກ, ຊຸມຊົນ Latinx ແລະ ຊຸມຊົນທີ່ບໍ່ມີເອກະສານຕ່າງໆ ໄດ້ຜະເຊີນກັບຜົນກະທົບເຫລົ່ານີ້ຢ່າງບໍ່ສົມສ່ວນ. ນອກຈາກນັ້ນ, ຜົນກະທົບເຫຼົ່ານີ້ຍັງໄດ້ຖືກປະກາດຢ່າງເປັນທາງການໃນກຸ່ມ ປະຊາຊົນທີ່ມີຄວາມອ່ອນແອທາງເສດຖະກິດທີ່ອາໄສຢູ່ໃນຊຸມຊົນ ຊົນນະບົດ, ຫ່າງໄກສອກຫຼີກ ແລະ ຊຸມຊົນ ຊົນເຜົ່າ ອີກດ້ວຍ.

ເວລາກໍານົດໃນການສະໝັກແມ່ນ ວັນທີ 6 ພະຈິກ 2020

ສະໝັກໄດ້ທີ່ນີ້ https://www.surveymonkey.com/r/62SK6RK
ຫາກທ່ານຕ້ອງການຊ່ວຍເຫຼືອທາງເຕັກນິກ ຫລື ພາສາ, ກະລຸນາເບິ່ງ ລາຍການ<https://www.commerce.wa.gov/serving-communities/technical-assistance-from-trusted-community-messengers/>
ກ່ຽວກັບການຮ່ວມມືກັບອົງການຈັດຕັ້ງຜູ້ສົ່ງຂ່າວສານຂອງຊຸມຊົນທີ່ເຊື່ອຖືໄດ້ ເຊິ່ງພ້ອມໃນການຊ່ວຍເຫຼືອ

ອົງກອນທີ່ບໍ່ຫວັງຜົນກຳໄລ ຫລື
ອີເມວ community.outreach@commerce.wa.gov<mailto:community.outreach@commerce.wa.gov> ແລະໃຫ້ບອກຊື່, ເບີໂທລະສັບຂອງທ່ານ, ເຄົ້າຕີທ່ານອາໄສຢູ່ ແລະ ພາສາທີ່ທ່ານຕ້ອງການຂໍຄວາມຊ່ວຍເຫຼືອ ແລະ ພວກເຮົາຈະເຊື່ອມຕໍ່ຫາທ່ານ.